ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ຫ້ອງການກະຊວງ

ເລກທີ 1736 /ຫກງ

ນະຄອນຫຼວງວຽງຈັນ,ວັນທີ 25 ສິງຫາ 2020

## ໜັງສືແຈ້ງເຊີນປະມູນ

- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການກະຊວງການເງິນ ສະບັບເລກທີ 5050/ກງ, ລົງວັນທີ 24 ທັນວາ 2019.
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ ວ່າດ້ວຍການອະນຸມັດໃຫ້ປະມູນເປີດກວ້າງພາຍໃນ ຄັດເລືອກເອົາບໍລິສັດທີ່ປຶກສາເພື່ອອອກແບບພັດທະນາໂຄງການສ້າງລະບົບ AMIS ສະບັບເລກທີ 2186/ກງ, ລົງວັນທີ 18 ສິງຫາ 2020.
- ອີງຕາມ ໜັງສືສະເໜີຂອງກົມຄຸ້ມຄອງຊັບສິນຂອງລັດ ສະບັບເລກທີ 2031 /ຄຊລ, ລົງວັນທີ 24 ສິງຫາ 2020

ຫ້ອງການກະຊວງການເງິນ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານ ຜູ້ທີ່ມີຄວາມສົນໃຈປະມູນຈັດຈ້າງຊາບວ່າ:

1. ກົມຄຸ້ມຄອງຊັບສິນຂອງລັດ ກະຊວງການເງິນ ໄດ້ຮັບອະນຸມັດໃຫ້ນໍາໃຊ້ ງົບປະມານປະຈໍາປີ 2020 ບ້ວງທຶນເປັນທຶນສະໄໝ ເພື່ອດໍາເນີນການຈັດຈ້າງຄັດເລືອກເອົາບໍລິສັດທີ່ປຶກສາ ອອກແບບພັດທະນາໂຄງການສ້າງລະບົບຄຸ້ມຄອງຊັບສິນຂອງລັດໃຫ້ເປັນທັນສະໄໝ ແບບເອເລັກໂຕຼນິກ (AMIS) ດ້ວຍຮູບແບບການດໍາເນີນການປະມູນເປີດກ້ວາງ.
2. ຂໍເຊີນບັນດາບໍລິສັດ/ວິສາຫະກິດ ທີ່ມີຄວາມສົນໃຈ ສໍາລັບການອອກແບບພັດທະນາໂຄງການສ້າງລະບົບຄຸ້ມຄອງຊັບສິນຂອງລັດໃຫ້ເປັນທັນສະໄໝ ແບບເອເລັກໂຕຼນິກ (AMIS).
3. ການປະມູນ ແມ່ນດໍາເນີນຕາມຂັ້ນຕອນການປະມູນເປີດກວ້າງພາຍໃນ ທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄໍາແນະນໍາ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
4. ບໍລິສັດ/ວິສາຫະກິດ ທີ່ມີຄວາມສົນໃຈຊື້ຊອງປະມູນ ສາມາດຊື້ໄດ້ທີ່ກົມຄຸ້ມຄອງຊັບສິນຂອງລັດ ກະຊວງການເງິນ, ບ້ານໂພນໄຊ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ຂາຍຊອງປະມູນ 1.000.000 ກີບ/ຊອງ ໃນວັນທີ..26..ສິງຫາ.2020..ຫາວັນທີ..21.ກັນຍາ.2020..., ຊອງປະມູນຕ້ອງສົ່ງກ່ອນເວລາ 14:00 ໂມງ ຂອງວັນທີ..21.ກັນຍາ.2020... ຢູ່ທີ່ ຫ້ອງປະຊຸມຊັ້ນ 04 ກະຊວງການເງິນ ແລະ ຊອງປະມູນທຸກໆຊອງ ຈະໄດ້ເປີດໃນເວລາ 14:30 ໂມງ ໃນວັນດຽວກັນ, ຢູ່ທີ່ຫ້ອງປະຊຸມຊັ້ນ 04 ກະຊວງການເງິນ ໂດຍຊ້ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈຢາກເຂົ້າຮ່ວມ.
5. ສະຖານທີ່ຍື່ນຊອງປະມູນຕ້ອງຍື່ນຢູ່ ກົມຄຸ້ມຄອງຊັບສິນຂອງລັດ ກະຊວງການເງິນ, ຕຶກໃຫຍ່ 04 ຊັ້ນ ຫ້ອງປະຊຸມໃຫຍ່ຊັ້ນ 04 (ຖ້າສົ່ງກາຍກໍານົດເວລາຈະບໍ່ພິຈາລະນາ).
6. ສໍາລັບເງື່ອນໄຂ, ຄໍາແນະນໍາ, ແບບຟອມການປະມູນໄດ້ຄັດຕິດຊ້ອນທ້າຍມາພ້ອມນີ້.
7. ບໍລິສັດ/ວິສາຫະກິດ ຕ້ອງປະກອບເອກະສານຕາມແບບຟອມແນະນໍາ ແລະ ເງື່ອນໄຂທີ່ໄດ້ກໍານົດໄວ້ໃຫ້ຄົບຖ້ວນ.

ຮອງ ຫົວໜ້າຫ້ອງການ

ນ.ຄໍາຂວັນ ສີຊານົນ

ຕິດຕໍ່ພົວພັນ: ກົມຄຸ້ມຄອງຊັບສິນຂອງລັດ ກະຊວງການເງິນ ຖະໜົນຫລວງພະບາງ, ບ້ານໂພນໄຊ, ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ
ໂທລະສັບ/ແຟັກ 021 263252
ເພີ່ມເຕີມໂທ: 020 55404275, 020 22249499

สแกนด้วย CamScanner